สาทาละนะลัด ปะຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ຄົມມະນາຄົມ ຂົນສົ່ງ

ໄປສະນີ ແລະ ກໍ່ສ້າງ ເລກທີ: 2426 /ຄຂປກ

## ຂໍ້ກຳນົດ

## ກ່ຽວກັບການອະນຸຍາດສ້າງຕັ້ງໂຮງຮຽນ ແລະ ດຳເນີນທຸລະກິດ

## ສອນຂັບລົດ

- ອີງຕາມກົດໝາຍວ່າດ້ວຍການຂົນສົ່ງທາງບົກ;
- ອີງຕາມກົດໝາຍວ່າດ້ວຍການຈະລາຈອນທາງບົກ;
- ອີງຕາມກົດໝາຍວ່າດ້ວຍທຸລະກິດ;
- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ;
- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂອງຕ່າງປະເທດຢູ່ ສປປ ລາວ;
- ອີງຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ່ 66 /ນຍ ລົງວັນທີ່ 20/05/99 ວ່າດ້ວຍການຈັດ ຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ;
- ອີງຕາມການສະເໜີຂອງກົມຂົນສົ່ງ.

**ລັດຖະມົນຕີ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ອອກຂໍ້ກຳນົດ:**

## ໝວດທີ I

## ຂໍ້ກຳນົດທົ່ວໄປ

**ມາດຕາ 1 : ຈຸດປະສົງ**

ຂໍ້ກຳນົດສະບັບນີ້ ວາງຫລັກການ ແລະ ລະບຽບການສຳລັບການຄຸ້ມຄອງ ແລະ ການອະນຸຍາດ ສ້າງຕັ້ງໂຮງຮຽນສອນຂັບລົດ ໃຫ້ເຄື່ອນໄຫວທຸລະກິດ ໂດຍສອດຄ່ອງ ຕາມແນວທາງນະໂຍບາຍຂອງ ພັກ, ລະບຽບກົດໝາຍຂອງ ລັດ ພ້ອມທັງຮັບປະກັນ ໃຫ້ຜູ້ຜ່ານການຮຽນ ຫລື ຜ່ານການຝຶກອົບຮົມ ມີຄວາມສາມາດອັນແນ່ນອນໃນການຂັບຂີ່, ມີຄວາມຮູ້ພື້ນຖານ ກ່ຽວກັບເຕັກນິກກົນຈັກຍານພາຫະນະຂົນສົ່ງທາງບົກ ມີຄວາມຮູ້ອັນເລິກເຊິ່ງກ່ຽວກັບກົດລະບຽບຈະລາຈອນທາງບົກ ແລະ ກ່ຽວກັບມາລະຍາດທີ່ ດີຂອງນັກຂັບຂີ່ ປະກອບສ່ວນ

ເຂົ້າໃນການນຳໃຊ້ເສັ້ນທາງຂົນສົ່ງທາງບົກ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມປອດໄພ.

**ມາດຕາ 2 : ເປົ້າໝາຍທີ່ຈະໄດ້ຮັບອະນຸຍາດ**

ບຸກຄົນຫລືນິຕິບຸກຄົນ ນັບທັງຄົນລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງໂຮງຮຽນສອນຂັບລົດລ້ອນແຕ່ມີສິດສະເໜີຂໍສ້າງຕັ້ງໂຮງຮຽນດັ່ງກ່າວ ເພື່ອດຳເນີນທຸລະກິດມຕາມລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 3 : ພັນທະຕໍ່ລັດ**

ພາຍຫລັງທີ່ໄດ້ເຄື່ອນໄຫວທຸລະກິດແລ້ວ, ຜູ້ທີ່ໄດ້ຮັບອະນຸຍາດສ້າງຕັ້ງໂຮງຮຽນ ແລະ ດຳເນີນທຸລະກິດສອນຂັບລົດ ຕ້ອງປະຕິບັດພັນທະຕໍ່ລັດຢ່າງເຂັ້ມງວດເຊັ່ນ:

- ເສັຍພາສີອາກອນໃຫ້ລັດຕາມລະບຽບກົດໝາຍພາສີ, ກົດໝາຍສ່ວຍສາອາກອນຕາມລະບຽບຕ່າງໆທີ່ກ່ຽວຂ້ອງ ແລະ ຖືບັນຊີເງິນຝາກຕາມກົດໝາຍການບັນຊີວິສາຫະກິດ.
- ເຮັດບົດສະຫຼຸບລາຍງານ ການເຄື່ອນໄຫວ ເຊັ່ນ: ຜົນຂອງການຮຽນການສອນ ປະຈຳເດືອນ ແລະ ປີ ໃຫ້ພະແນກ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ທີ່ຄຸ້ມຄອງຕົນຮັບຊາບ ຢ່າງເປັນ ປົກກະຕິ.
- ປະຕິບັດຕາມຂໍ້ການົດ ແລະ ລະບຽບການ ກ່ຽວຂ້ອງຕ່າງໆ ທີ່ກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ແລະ ຂະແໜງການອື່ນໆ ທີ່ກ່ຽວຂ້ອງ ຂອງລັດວາງອອກ.
-

## ໝວດທີ II

## ລະບຽບ ການຂໍອະນຸຍາດ

**ມາດຕາ 4 : ການຂໍອະນຸຍາດ**

ການຂໍອະນຸຍາດສ້າງຕັ້ງ ໂຮງຮຽນສອນຂັບລົດ ໃຫ້ປະຕິບັດຕາມມາດຕາ 16,17, 18 ແລະ 19 ຂອງກົດໝາຍວ່າດ້ວຍທຸລະກິດ ແລະ ຕາມກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນພາຍໃນ ສ່ວນ ການລົງທຶນຂອງຕ່າງປະເທດນັ້ນ ໃຫ້ປະຕິບັດຕາມມາດຕາ 23 , 24, 25 ແລະ 26 ຂອງກົດໝາຍວ່າດ້ວຍ ການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນຂອງຕ່າງປະເທດຢູ່ ສປປ ລາວ.

**ມາດຕາ 5 : ເງື່ອນໄຂ ຂອງຜູ້ທີ່ຈະໄດ້ຮັບອະນຸຍາດ.**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງ ຂໍອະນຸຍາດສ້າງຕັ້ງໂຮງຮຽນສອນຂັບລົດ ຕ້ອງມີເງື່ອນໄຂດັ່ງນີ້:

- ມີຄະນະອຳນວຍການ ທີ່ມີລະດັບການສຶກສາຈົບມັດທະຍົມສົມບູນ ຫຼື ມີຄວາມຮູ້ດ້ານວິຊາສະເພາະກົນຈັກພາຫະນະຊັ້ນກາງຂື້ນໄປ ແລະ ຕ້ອງໄດ້ຜ່ານການຝຶກອົບຮົມ ກ່ຽວກັບລະບຽບ ກົດໝາຍວ່າດ້ວຍການຂົນສົ່ງທາງບົກ, ກົດໝາຍວ່າດ້ວຍການຈະລາຈອນທາງບົກ ແລະ ທິດສະດີການຂັບຂີ່ ໂດຍມີໃບຢັ້ງຢືນຢ່າງຖືກຕ້ອງ.
- ມີຄູສອນພາກທິດສະດີ ຢ່າງໜ້ອຍໜຶ່ງຄົນ ທີມີວິຊາສະເພາະຊັ້ນຕົ້ນ ດ້ານເຕັກນິກກົນຈັກພາຫະນະຂົນສົ່ງທາງບົກ, ໄດ້ຜ່ານ ແລະ ມີໃບຢັ້ງຢືນການຝຶກອົບຮົມຫຼັກສູດການສອນຂັບລົດຢ່າງຖືກຕ້ອງ.
- ມີຄູສອນພາກປະຕິບັດຕົວຈິງ ຢ່າງໜ້ອຍສອງຄົນ ທີ່ມີໃບຂັບຂີ ປະເພດລົດບັນທຸກ (ທ້ອງ C) ເປັນຢ່າງຕ່ຳ ແລະ ມີປະສົບການຂັບຂີ່ຢ່າງໜ້ອຍ 5ປີ.
- ມີສະຖານທີ່ຕັ້ງ ແລະ ສິ່ງປຸກສ້າງຕ່າງໆ ທີ່ມີລັກສະນະຖາວອນ ເໝາະສົມກັບຂະໜາດຂອງກິດຈະການ, ມີຫ້ອງການບໍລິຫານ, ຫ້ອງຮຽນພາກທິດສະດີ, ເດີ່ນຝຶກແອບຂັບລົດ ຊຶ່ງມີເອກະສານຢັ້ງຢືນກຳມະສິດ, ໃບມອບກຳມະສິດນຳໃຊ້ ຫຼື ສັນຍາເຊົ່າ ຢ່າງຖືກຕ້ອງ.
- ມີພາຫະນະ, ອຸປະກອນ ແລະ ເຄື່ອງມືຮັບໃຊ້ທີ່ຈຳເປັນ ອັນເປັນພື້ນຖານແກ່ການສິດສອນດັ່ງນີ້:

1. ພາຫະນະຮຽນຂັບ ຢ່າງໜ້ອຍ 3 ຄັນ. ( ປະເພດລົດເບົາ 1 ຄັນ, ປະເພດລົດຂົນສົ່ງ 2 ຄັນ).
2. ຫ້ອງຮຽນທີ່ປະກອບອຸປະກອນການຮຽນການສອນຄົບຊຸດ ສາມາດບັນຈຸນັກຮຽນໄດ້ຢ່າງໜ້ອຍ 30 ຄົນ.
3. ເອກະສານຄູມືການສິດສອນ ທີ່ຜ່ານການຮັບຮອງຈາກການຂົນສົ່ງ ກະຊວງ ຄຂປກ.
4. ເຄື່ອງປະກອບການສິດສອນ ເຊັ່ນ: ຮູບພາບ, ໂປສເຕີ ສະແດງເຖິງສ່ວນປະກອບຂອງລົດຍົນ,ປ້າຍສັນຍານຈະລາຈອນຕ່າງໆ, ສິ້ນສ່ວນເຄື່ອງປະກອບຈຳລອງຂອງລົດ ( ຫົວຈັກ, ກະປູກເກັຍ, ເພືອງທ້າຍ, ເພົາສົ່ງກຳລັງ ແລະ ອື່ນໆ) ເພື່ອເປັນຕົວຢ່າງ ປະກອບການສິດສອນ ແລະ ສະ ແດງໃຫ້ນັກຮຽນໄດ້ສຳຜັດຕົວຈິງ.

- ຕ້ອງມີຫລັກສູດການຮຽນການສອນ ຢ່າງຕ່ຳຕາມທີ່ໄດ້ກຳນົດໄວ້ດັ່ງນີ້:

1 <u>ພາກປົກກະຕິ</u>( ສອນໄລຍະຍາວ )ໂດຍແບ່ງອອກເປັນການສອນພາກທິດສະດີ ແລະ ພາກປະຕິບັດຕົວຈິງ ຊຶ່ງມີການກຳນົດວິຊາ ແລະ ຊົ່ວໂມງຮຽນໄວ້ດັ່ງນີ້:

| ລ/ດ | ລາຍລະອຽດການຮຽນການສອນ | ຫົວໜ່ວຍ | ປະເພດຮຽນຂັບຂີ່ | |
|---|---|---|---|---|
| | | | B | C |
| | - ກຳນົດມື້ຮຽນ ຕາມຫລັກສູດການຝຶກອົບຮົມ | ມື້ | 60 | 90 |
| 1. | - <u>ພາກທິດສະດີ</u> | ຊົ່ວໂມງ | <u>84</u> | <u>164</u> |
| | 1. ກົດລະບຽບການຈະລາຈອນ,ປ້າຍສັນຍານ,ສາລະບານການເດີນລົດ. | - " - | 14 | 14 |
| | 2. ທິດສະດີການຝຶກແອບຂັບລົດເບື້ອງຕົ້ນ. | - " - | 7 | 7 |
| | 3. ຄວາມຮູ້ກ່ຽວກັບເຄື່ອງຈັກ ແລະ ການແກ້ໄຂຂໍ້ຂັດຂ້ອງ | - " - | 7 | 7 |
| | 4. ການບົວລະບັດຮັກສາລົດ ແລະ ຫລັກການບັນທຸກ. | - " - | 14 | 14 |
| | 5. ສາເຫດ ແລະ ການປ້ອງກັນອຸປະຕິເຫດທາງຖນົນ. | - " - | 14 | 14 |
| | 6. ຄູນສົມບັດ,ມາລະຍາດຂອງນັກຂັບຂີ່ (ໜ້າທີ່ຂອງຜູ້ຂັບລົດ). | - " - | 7 | 7 |
| | 7. ຄວາມຮູ້ພື້ນຖານກ່ຽວກັບການຮັກສາສຸຂະພາບຂອງຜູ້ຂັບຂີ່ ແລະ ຫລັກການປະຖົມພະຍາບານຜູ້ໄດ້ຮັບບາດເຈັບຈາກອຸປະຕິເຫດ. | - " - | 7 | 7 |
| | 8. ທິດສະດີການສ້ອມແປງຂັ້ນຕົ້ນ. | - " - | - | 80 |
| | 9. ເຕັກນິກການຂັບຂີ່ເພື່ອຄວາມປອດໄພ. | - " - | 7 | 7 |
| | 10. ຄວາມຮູ້ພື້ນຖານກ່ຽວກັບກົດໝາຍວ່າດ້ວຍການຂົນສົ່ງທາງບົກ,ກົດໝາຍວ່າດ້ວຍທາງຫລວງ,ກົດໝາຍວ່າດວ້ຍການຈະລາຈອນທາງບົກ,ກົດໝາຍແພ່ງ,ກົດໝາຍອາຍາ. | - " - | 7 | 7 |
| 2. | - <u>ພາກປະຕິບັດຕົວຈິງ.</u> (ຈຳນວນຊົ່ວໂມງຮຽນ ຕໍ່ນັກຮຽນ 1 ຄົນ). | - " - | <u>30</u> | <u>30</u> |
| | 1. ການຝຶກແອບຂັບລົດນອກສະຖານທີ່. | - " - | 16 | 16 |
| | 2. ຮຽນຂັບປະຈຳທີ່ (ຂັບເຂົ້າຮູບໂຕ T,C). | - " - | 14 | 14 |

2. <u>ພາກບຳລຸງ</u> (ສິດສອນໄລຍະສັ້ນ ສຳລັບຜູ້ທີ່ຂັບລົດເປັນແລ້ວ ໂດຍແບ່ງການສອນພາກທິດສະດີ ແລະ ພາກປະຕິບັດຕົວຈິງ ຊຶ່ງມີການກຳນົດວິຊາ ແລະ ຊົ່ວໂມງຮຽນໄວ້ດັ່ງນີ້:

| ລ/ດ | ລາຍລະອຽດການຮຽນການສອນ | ຫ/ໜ | ປະເພດຮຽນຂັບຂີ່ | | | | |
|---|---|---|---|---|---|---|---|
| | | | A | A1 | B | C | D |
| | - ກຳນົດມື້ຮຽນ ຕາມຫລັກສູດການຝຶກອົບຮົມ | ມື້ | 5 | 10 | 15 | 15 | 15 |
| 1 | - ພາກທິດສະດີ | ຊົ່ວໂມງ | 28 | 49 | 70 | 70 | 70 |
| | 1. ກົດລະບຽບການຈະລາຈອນ,ປ້າຍສັນຍານ,ສາລະບານການເດີນລົດ. | - " - | 7 | 14 | 14 | 14 | 14 |
| | 2. ການບົວລະບັດຮັກສາລົດ ແລະ ຫລັກການບັນທຸກ. | - " - | - | - | 14 | 14 | 14 |
| | 3. ສາເຫດ ແລະ ການປ້ອງກັນອຸປະຕິເຫດທາງຖນົນ. | - " - | 7 | 7 | 7 | 7 | 7 |
| | 4. ຄູນສົມບັດ,ມາລະຍາດຂອງນັກຂັບຂີ່ (ໜ້າທີ່ຂອງຜູ້ຂັບລົດ). | - " - | 7 | 7 | 7 | 7 | 7 |
| | 5. ຄວາມຮູ້ພື້ນຖານກ່ຽວກັບການຮັກສາສຸຂະພາບຂອງຜູ້ຂັບຂີ່ ແລະ ຫລັກການປະຖົມພະຍາບານຜູ້ໄດ້ຮັບບາດເຈັບຈາກອຸປະຕິເຫດ. | - " - | - | 7 | 7 | 7 | 7 |
| | 6. ເຕັກນິກການຂັບຂີ່ເພື່ອຄວາມປອດໄພ. | - " - | 7 | 7 | 7 | 7 | 7 |
| | 7. ຄວາມຮູ້ພື້ນຖານກ່ຽວກັບກົດໝາຍວ່າດ້ວຍຂົນສົ່ງທາງບົກ,ກົດໝາຍວ່າດ້ວຍທາງຫລວງ,ກົດໝາຍວ່າດ້ວຍການຈະລາຈອນທາງບົກ,ກົດໝາຍແພ່ງ,ກົດໝາຍອາຍາ. | - " - | - | 7 | 14 | 14 | 14 |
| 2. | - ພາກປະຕິບັດຕົວຈິງ. (ຈຳນວນຊົ່ວໂມງຮຽນ ຕໍ່ນັກຮຽນ 1 ຄົນ). | - " - | 7 | 7 | 14 | 14 | 14 |
| | 8. ການຝຶກແອບຂັບລົດນອກສະຖານທີ່. | - " - | - | - | 7 | 7 | 7 |
| | 9. ຮຽນຂັບປະຈຳທີ່ (ຂັບເຂົ້າຮູບໂຕ T,C,ຄອກໝູເລກ 0,8,ງູລອຍ ). | - " - | 7 | 7 | 7 | 7 | 7 |

**ມາດຕາ 6 : ຂັ້ນຕອນການຂໍອະນຸຍາດ.**

ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຈຸດປະສົງຂໍອະນຸຍາດສ້າງຕັ້ງໂຮງຮຽນສອນຂັບລົດ ຫາກມີເງື່ອນໄຂຄົບຖ້ວນ ຕາມທີ່ກຳນົດໄວ້ ຢູ່ໃນມາດຕາ 5 ຂ້າງເທິງນີ້ແລ້ວ ຕ້ອງໄດ້ຍື່ນຄຳຮ້ອງ ຫລື ເອກະສານທີ່ ຈຳເປັນຕ່າງໆ ຕໍ່ຂະແໜງການຄ້າ ແລະ ທ່ອງທ່ຽວ, ຈາກນັ້ນ ຕ້ອງປະກອບເອກະສານຍື່ນຕໍ່ພະແນກຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ປະຈຳແຂວງ, ກຳແພງນະຄອນ ຫລື ເຂດພິເສດ ບ່ອນໂຮງຮຽນນັ້ນຕັ້ງຢູ່ ດັ່ງນີ້:

1. ໃບຄຳຮ້ອງຂໍສ້າງຕັ້ງໂຮງຮຽນ.
2. ໃບຢັ້ງຢືນທີ່ຢູ່ (ສຳລັບຄົນລາວ) ບັດປະຈຳຕົວຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ກະຊວງພາຍໃນອອກໃຫ້ (ສຳລັບຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ) ຫລື ໃບອະນຸຍາດລົງທຶນຈາກ ຄະນະກຳມະການຄຸ້ມຄອງການລົງທຶນ (ສຳລັບຄົນຕ່າງປະເທດ).
3. ເອກະສານຂໍຈົດທະບຽນວິສາຫະກິດຕາມແບບຟອມຂອງຂະແໜງການຄ້າ.
4. ບົດວິພາກເສດຖະກິດ.
5. ກົດລະບຽບຂອງໂຮງຮຽນ.
6. ໂຄງຮ່າງການຈັດຕັ້ງ.
7. ປະຫວັດຫຍໍ້ຂອງອຳນວຍການ ແລະ ນັກວິຊາການ.
8. ສຳເນົາໃບປະກາດສະນິຍະບັດ ຫລື ໃບຢັ້ງຢືນວິຊາສະເພາະຂອງຄູສອນ.
9. ບັນຊີຊັບສົມບັດຄົງທີ່ ແລະ ທຶນໝູນວຽນ.
10. ບັນຊີຜູ້ຖືຮຸ້ນ (ຫາກເປັນບໍລິສັດຫຸ້ນສ່ວນ).
11. ໃບຢັ້ງຢືນຖານະເງິນຝາກຈາກທະນາຄານ.
12. ໃບຢັ້ງຢືນການມອບພັນທະ (ຫາກໄດ້ດຳເນີນທຸລະກິດມາກ່ອນແລ້ວ).
13. ໃບຢັ້ງຢືນກຳມະສິດໃນການຄອບຄອງ ແລະ ນຳໃຊ້ສະຖານທີ່ ໂຮງຮຽນ ແລະ ພາຫະນະ.
14. ໃບສະຫລູບການປະຕິບັດແຜນການປະຈຳປີຜ່ານມາ.
15. ແຜນຄາດຄະເນການດຳເນີນທຸລະກິດປະຈຳປີ.
16. ຮູບຖ່າຍ ຂະໜາດ 3x4 ຂອງຜູ້ອຳນວຍການ ຈຳນວນ 6 ໃບ.

**ມາດຕາ 7 : ການອອກອະນຸຍາດ.**

ຫຼັງຈາກໄດ້ຮັບເອກະສານຕ່າງໆ ດັ່ງທີ່ໄດ້ກຳນົດໄວ້ ຢູ່ໃນມາດຕາ 5 ຂ້າງເທິງນີ້ແລ້ວ , ພະແນກ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ແຂວງ, ກຳແພງນະຄອນ ຫຼື ເຂດພິເສດບ່ອນໂຮງຮຽນນັ້ນຕັ້ງຢູ່ ຈະໄດ້ຄົ້ນຄວ້າພິຈາລະນາ ແລະ ຈະໃຫ້ຄຳຕອບແກ່ຜູ້ສະເໜີເປັນລາຍລັກອັກສອນ ພາຍໃນ 30 ວັນ. ຫາກພິຈາລະນາເຫັນດີ ກໍ່ຈະອອກໃບອະນຸຍາດສ້າງຕັ້ງໂຮງຮຽນດັ່ງກ່າວໃຫ້.

ຜູ້ທີ່ໄດ້ຮັບອະນຸຍາດສ້າງຕັ້ງສອນຂັບລົດ ຈະຕ້ອງໄດ້ຈ່າຍຄ່າທຳນຽມອອກໃບອະນຸຍາດ ຕາມອັດຕາທີ່ທາງການໄດ້ກຳນົດອອກ ໃນແຕ່ລະໄລຍະ.

**ມາດຕາ 8 : ອາຍຸຂອງໃບອະນຸຍາດ.**

ໃບອະນຸຍາດສ້າງຕັ້ງ ໂຮງຮຽນສອນຂັບລົດ ມີອາຍຸການນຳໃຊ້ໄດ້ 12 ເດືອນ ນັບແຕ່ມື້ອອກອະນຸຍາດເປັນຕົ້ນໄປ. ກ່ອນມື້ໝົດອາຍຸການດັ່ງກ່າວຕ້ອງໄດ້ຍື່ນຄຳຮ້ອງຂໍສືບຕໍ່ລ່ວງໜ້າຢ່າງໜ້ອຍ 30 ວັນ ໃນໄລຍະລໍຖ້າຄຳຕອບ ໂຮງຮຽນດັ່ງກ່າວສາມາດເຄື່ອນໄວທຸລະກິດເປັນປົກກະຕິ.

## ໝວດທີ່ III

## ການເກືອດຫ້າມ

**ມາດຕາ 9: ຂໍ້ເກືອດຫ້າມສຳລັບຜູ້ທີ່ໄດ້ຮັບອະນຸຍາດ.**

ຫ້າມຜູ້ທີ່ໄດ້ຮັບອະນຸຍາດສ້າງຕັ້ງໂຮງຮຽນ ແລະ ດຳເນີນທຸລະກິດສອນຂັບລົດ ມີການກະທຳດັ່ງຕໍ່ໄປນີ້:

- ດຳເນີນທຸລະກິດຜິດໄປຈາກເປົ້າໝາຍທີ່ຕົນໄດ້ຮັບອະນຸຍາດ;
- ເອົາໃບອະນຸຍາດຂອງຕົນໃຫ້ຜູ້ອື່ນນຳໃຊ້ໃຫ້ເຊົ່າ ຫລື ໂອນໃຫ້ຜູ້ອື່ນ;
- ເກັບເອົາຄ່າຮຽນ ຫລື ຄ່າບຳລຸງເກີນກ່ວາອັດຕາທີ່ທາງການໄດ້ຕົກລົງເຫັນດີ;
- ຢຸດການເຄື່ອນໄຫວທຸລະກິດ ໂດຍບໍ່ແຈ້ງໃຫ້ພະແນກ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ;
- ສືບຕໍ່ເຄື່ອນໄຫວທຸລະກິດພາຍຫລັງໃບອະນຸຍາດໝົດອາຍຸການນຳໃຊ້;
- ແຈ້ງຂໍ້ມູນເທັດ ຫລື ປອມແປງເອກະສານ ປະກອບຄຳຮ້ອງຂໍສ້າງຕັ້ງໂຮງຮຽນສອນຂັບລົດ.

**ມາດຕາ 10 : ຂໍ້ເກືອດຫ້າມທົ່ວໄປ.**

ຫ້າມຜູ້ທີ່ບໍ່ໄດ້ຮັບອະນຸຍາດສ້າງຕັ້ງໂຮງຮຽນ ແລະ ດຳເນີນທຸລະກິດສອນຂັບລົດ ທຳການເຄື່ອນໄຫວທຸລະກິດດັ່ງກ່າວຢ່າງເດັດຂາດ.

## ໝວດທີ່ IV
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 11: ນະໂຍບາຍຕໍ່ຜູ້ມີຜົນງານ.**

ຜູ້ໄດ້ຮັບອະນຸຍາດສ້າງຕັ້ງໂຮງຮຽນ ແລະ ດໍາເນີນທຸລະກິດສອນຂັບລົດ ທີ່ໄດ້ດໍາເນີນງານຢ່າງມີຄູນນະພາບ ແລະ ສອດຄ່ອງຕາມລະບຽບກົດໝາຍ ຈະໄດ້ຮັບການຍ້ອງຍໍ, ໄດ້ຮັບອະນຸຍາດສືບຕໍ່ດໍາເນີນທຸລະກິດ ແລະ ນະໂຍບາຍອື່ນໆ ທີ່ເໝາະສົມຕາມທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນພາຍໃນ ແລະ ກົດໝາຍວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂອງຕ່າງປະເທດຢູ່ ສປປ ລາວ.

**ມາດຕາ 12: ມາດຕະການຕໍ່ຜູ້ລະເມີດ.**

ບຸກຄົນ ຫລື ນິຕິບຸກຄົນໃດຫາກໄດ້ລະເມີດຂໍ້ກໍານົດສະບັບນີ້ ຈະຖືກສຶກສາອົບຮົມ ປັບໃໝ ຫລື ຖືກລົງໂທດທາງອາຍາ ຕາມສະຖານເບົາ ຫລື ໜັກ.

**ມາດຕາ 13: ມາດຕະການສຶກສາອົບຮົມ.**

ຜູ້ດໍາເນີນທຸລະກິດໂຮງຮຽນສອນຂັບລົດ ຫາກໄດ້ມີການລະເມີດໃດໜຶ່ງເຊັ່ນ ບໍ່ເອົາໃຈໃສ່ໃນການສອນ ຫຼື ການຝຶກອົບຮົມ, ບໍ່ສອນຢ່າງຄົບຖ້ວນຕາມຫລັກສູດ ທີ່ກໍານົດໄວ້, ບໍ່ປັບປຸງພາຫະນະອຸປະກອນ ແລະ ຫລັກສູດການສິດສອນ ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ.

**ມາດຕາ 14: ມາດຕາການປັບໃໝ.**

ບຸກຄົນ ຫລື ນິຕິບຸກຄົນໃດຫາກມີການກະທໍາໃດໜຶ່ງທີ່ເປັນການລະເມີດຂໍ້ກໍານົດສະບັບນີ້ ຈະຖືກປັບໃໝດັ່ງນີ້:

- ດໍາເນີນທຸລະກິດຜິດໄປຈາກເປົ້າໝາຍທີ່ຕົນໄດ້ຮັບອະນຸຍາດ, ເຄື່ອນໄຫວທຸລະກິດສອນຂັບລົດໂດຍບໍ່ໄດ້ຮັບອະນຸຍາດ ຫລືໂດຍນໍາໃຊ້ໃບອະນຸຍາດຂອງຜູ້ອື່ນ, ເອົາໃບອະນຸຍາດຂອງຕົນໃຫ້ຜູ້ອື່ນນໍາໃຊ້, ໃຫ້ເຊົ່າ ຫລື ໂອນໃຫ້ຜູ້ອື່ນ ຈະຖືກປັບໃໝ 10 ເທົ່າ ຂອງຄ່າທໍານຽມອອກໃບອະນຸຍາດ;
- ສືບຕໍ່ທໍາການເຄື່ອນໄຫວທຸລະກິດພາຍຫລັງໃບອະນຸຍາດໝົດອາຍຸການນໍາໃຊ້ ຫາກບໍ່ເກີນ 30 ວັນ ຈະຖືກປັບໃຫມ 2 ເທົ່າຫາກເກີນ 30 ວັນຂຶ້ນໄປຮອດ 90 ວັນ ຈະຖືກປັບໃໝ5 ເທົ່າຫາກເກີນ 90 ວັນຂຶ້ນໄປ ຈະຖືກປັບໃຫມ 10 ເທົ່າຂອງຄ່າທໍານຽມອອກໃບອະນຸຍາດ;
- ຢຸດການເຄື່ອນໄຫວທຸລະກິດໂດຍພະລະການ ຫລືໂດຍບໍ່ແຈ້ງໃຫ້ ພະແນກຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ ປະຈໍາແຂວງ, ກໍາແພງນະຄອນ ຫລື ເຂດພິເສດ ບ່ອນທີ່ຕົນດໍາເນີນທຸລະກິດ ຢູ່ນັ້ນຮັບຮູ້ເປັນລາຍລັກອັກສອນ ຫາກບໍ່ເກີນ 12 ເດືອນ

ຈະຖືກປັບໃໝ 5 ເທົ່າຫາກເກີນ 12 ເດືອນ ຈະຖືກປັບໃໝ 10 ເທົ່າ ຂອງຄ່າທຳນຽມອອກໃບອະນຸຍາດ.

**ມາດຕາ 15: ມາດຕະການທາງອາຍາ.**

ບຸກຄົນ ຫລື ນິຕິບຸກຄົນ ຫາກມີການກະທຳໃດໜຶ່ງທີ່ເປັນການລະເມີດຂໍ້ກຳນົດສະບັບນີ້ ເຊັ່ນ : ປອມແປງໃບອະນຸຍາດ, ສວຍໃຊ້ໜ້າທີ່ຕຳແໜ່ງ ອອກໃບອະນຸຍາດໂດຍບໍ່ຖືກຕ້ອງ ຈະຖືກລົງໂທດທາງອາຍາ.

## ໝວດທີ່ V

## ຂໍ້ກຳນົດສຸດທ້າຍ

**ມາດຕາ 16 : ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຂົນສົ່ງ ສົມທົບກັບພະແນກ ຄົມມະນະຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 17 : ຜົນບັງຄັບໃຊ້**

ຂໍ້ກຳນົດສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 21 JUL 2000
ລັດຖະມົນຕີວ່າການ ກະຊວງຄົມມະນາຄົມ
ຂົນສົ່ງໄປສະນີ ແລະ ກໍ່ສ້າງ

ເຜົ້າ ບຸນນະຜົນ